# ໂຄງການປິ່ນປົວຄົນຕ່າງດ້າວສຸກເສີນ (AEM)

## ການປະເມີນ ແລະ ປິ່ນປົວພະຍາດໂຄວິດ 19

### ທີ່ມາ

ໂຄງການປິ່ນປົວຄົນຕ່າງດ້າວສຸກເສີນແມ່ນໂຄງການ ສຳລັບບຸກຄົນຜູ້ທີ່ມີເຫດສຸກເສີນທາງການແພດ ແລະ ບໍ່ຢູ່ໃນຂໍ້ກຳນົດຂອງການເປັນປະຊາຊົນ ຫລື ເປັນຜູ້ອົບພະຍົບ ຫລື ເປັນບຸກຄົນທີ່ບໍ່ຜ່ານເກນ 5 ປີ.

ສະຖານະການສຸກເສີນທີ່ເໝາະສົມລວມມີ:

- ການຍັງມຫ້ອງສຸກເສີນ
- ການນອນພັກໂຮງໝໍຂອງຜູ້ປ່ວຍພາຍໃນ
- ການຜ່າຕັດຜູ້ປ່ວຍພາຍນອກ
- ການຜອກໝາກໄຂ່ຫລັງ
- ການປິ່ນປົວມະເລັງ
- ຢາຕໍ່ຕ້ານການລຸກລາມ

### ການປັບປຸງແຜນງານ

ເພື່ອຕອບກັບ ການລະບາດເຊື້ອໂຄວິດ 19 ອົງການສາທາລະນະສຸກ (HCA) ໄ ້ດຍືນ ກົດສຸກເສີນ. ກົດນີ້ຈະລວມມີ:

- ສະພາບການສຸກເສີນ ຈະລວມມີການປະເມີນ ແລະ ການປິ່ນປົວພະຍາດໂຄວິດ 19.
- ອົງປະກອບການທົດສອບ ແລະ ປິ່ນປົວລວມມີຫ້ອງການ, ຄຣີນິກ ຫລື ໂຫປິກສາສຸຂະພາບ.
- ການບໍລິການທີ່ໄດ້ຖືກຮັບຮອງ. ບຸກຄົນຜູ້ທີ່ຖືກວດພົບເປັນພະຍາດໂຄວິດ 19 ອາດຈະໄດ້ຮັບການຄຸ້ມຄອງການເຂົ້າຮັບການປິ່ນປົວ ແລະ ການຮັກສາທາງລະບົບຫາຍໃຈ. ຜົນບອກຂອງພະຍາດໂຄວິດ 19 ອາດຈະມີລົງການຕິດຕາມ ແລະ ປິ່ນປົວ.

### ວິທີການສະໝັກ

ຜູ້ໃຫຍ່ອາຍຸ 19 ເຖິງ 64 ປີ:

- **ອອນລາຍ:** ເຂົ້າເບິ່ງ Washington Healthplanfinder
- **ແອັບໂທລະສັບ:** ດາວໂຫລດ ແອັບ WAPlanfinder
- **ເອກະສານ:** ການສະໝັກຂໍການຄຸ້ມຄອງຮັກສາສຸຂະພາບ (18-001P)
- **ໂທ:** 1-855-923-4633

ຜູ້ໃຫຍ່ອາຍຸ 65 ປີ ຫລື ສູງກວ່າ, ຕາບອດ, ພິການ ຫລື ຕ້ອງການການດູແລໄລຍະຍາວ:

- **ອອນລາຍ:** Washington Connection
- **ເອກະສານ:** ຂໍສະໝັກການຂໍດູແລສຸຂະພາບຜູ້ສູງອາຍຸ, ຕາບອດ, ພິການ/ການຮັກສາສຸຂະພາບໄລຍະຍາວ (18-005)
- **ເບີໂທ:** 1-877-501-2233

ໜ້າປົກຂອງໂທລະສານ ໂຄງການ AEM ຈະລວມມີພະຍາດໂຄວິດ 19 ພາຍໃຕ້ການສະໝັກສຳລັບພາກການຄຸ້ມຄອງ.